

## ຊີວະນາໆພັນ:

ໂຄງການຊີວະນາໆພັນຂອງແຜນງານຄາດໄວ້ໃຫ້ຢູ່ໃນພື້ນທີ່ມີຊີວະນາໆພັນທີ່ສຳຄັນ, ແລະ ເລັ່ງໃສ່ລົດສິ່ງທີ່ຄຸກຄາມຊີວະນາໆພັນທີ່ໄດ້ຖືກກຳນົດໄວ້ໃນແຜນຍຸດທະສາດດັ່ງຄຳຖາມຕໍ່ໄປນີ້:

- ⇒ ລະບົບນິເວດ, ພູມມີປະເທດ, ຫຼື ທີ່ຢູ່ມີຄວາມຫຼາກຫຼາຍຂອງສິ່ງທີ່ມີຊີວິດທີ່ສຳຄັນໃນຂົງເຂດນັ້ນບໍ່? ມີສິ່ງທີ່ມີຊີວິດສະເພາະທີ່ພົບເຫັນຢູ່ໃນສະເພາະຂົງເຂດນັ້ນບໍ່?
- ⇒ ເຂດເປົ້າໝາຍຖືກກຳນົດໂດຍສົນທິສັນຍາສາກົນ, ກົດໝາຍ, ຂໍ້ຕົກລົງ ຫຼື ຄວາມເປັນເອກະພາບບໍ່?
- ⇒ ເຂດເປົ້າໝາຍ ຫຼື ພູມມີປະເທດ ມີທີ່ຢູ່ອາໄສຂອງສິ່ງທີ່ມີຊີວິດທີ່ສຳຄັນຈະອົບພະຍົບບໍ່?
- ⇒ ຂົງເຂດລະບົບນິເວດ, ພູມສັນຖານ, ທີ່ຢູ່ ຫຼື ສິ່ງທີ່ມີຊີວິດສະເພາະທີ່ນັ້ນໄດ້ຮັບການລົບກວນ ຫຼື ຢູ່ໃນຂັ້ນວິກິດບໍ່? ເປັນຂົງເຂດບຸລິມະສິດຂອງແຜນຈັດຕັ້ງປະຕິບັດ ແລະ ຍຸດທະສາດຂອງຊີວະນາໆພັນແຫ່ງຊາດບໍ່?
- ⇒ ເຂດສະເພາະອະນຸລັກກິດຈະກຳກັບຄວາມຫຼາກຫຼາຍຂອງກະສິກຳ, ແນວພັນທ້ອງຖິ່ນ, ແນວພັນພື້ນທີ່, ແນວພັນພື້ນບ້ານ, ດິນ/ຄວາມຫຼາກຫຼາຍຂອງສັດທີ່ບໍ່ມີກະດູກສັນຫຼັງ, ພັນຂອງປ່າ ແລະ/ຫຼື ມີຄວາມສຳພັນຂອງພັນທ້ອງຖິ່ນບໍ່?
- ⇒ ເຂດຈຸດສຸມເປັນຕົວຢ່າງທີ່ດີຂອງຊຸມຊົນທ້ອງຖິ່ນ ແລະ ຊຸມຊົນທີ່ຖືກອະນຸລັກເຊັ່ນປ່າສັກສິດ ຫຼື ຊຸມຊົນກຳນົດເປັນເຂດຫວງຫ້າມເພື່ອເປັນແຫຼ່ງອະນຸລັກຊີວະນາໆພັນບໍ່?



## ການປ່ຽນແປງດິນຟ້າອາກາດ:

ແຜນງານສະໜັບສະໜູນຊຸມຊົນ ແລະ ອົງການຈັດຕັ້ງມວນຊົນໃນການນຳໃຊ້ພະລັງງານທີ່ສະອາດ, ການຂົນສົ່ງທີ່ຍືນຍົງ, ປັບປຸງພະລັງງານທີ່ພໍພຽງ ແລະ ການນຳໃຊ້ດິນ. ເພື່ອລຸດຜ່ອນອາຍຜິດເຮືອນແກ້ວ ແລະ ບັນລຸເປົ້າໝາຍຂອງກອງທຶນສິ່ງແວດລ້ອມໂລກ, ແຜນງານໂຄງການຂະໜາດນ້ອຍຊ່ວຍການເສີມສ້າງຄວາມອາດສາມາດຂອງຊຸມຊົນ ແລະ ປັບປຸງຊີວິດການເປັນຢູ່ເພື່ອສ້າງຄວາມເຂັ້ມແຂງໃນການຟື້ນຕົວຈາກການປ່ຽນແປງດິນຟ້າອາກາດ.

ໂຄງການປ່ຽນແປງດິນຟ້າອາກາດໃນແຜນງານໂຄງການຂະໜາດນ້ອຍມີ:

- ⇒ ພະລັງງານທົດແທນເຊັ່ນພະລັງງານແສງອາທິດ, ເຄື່ອນໄຟຟ້າຂະໜາດນ້ອຍ, ອາຍແກສຊີວະພາບ ແລະ ການນຳໃຊ້ຈາກຜົນການຍ່ອຍສະລາຍຊີວະມວນ.
- ⇒ ວິວັດທະນະກຳພະລັງງານພໍພຽງສຳລັບຄອບຄົວ, ຕຶກອາຄານ ແລະ ອຸດສາຫະກຳລວມທັງເຕົາໄຟປະຢັດພະລັງງານ.
- ⇒ ການຂົນສົ່ງມວນຊົນທີ່ຍັ້ງຍືນ, ການຂົນສົ່ງທີ່ບໍ່ໃຊ້ເຄື່ອງຈັກ, ຕິດຕາມການປ່ອຍອາຍຜິດ ແລະ ລຸດຜ່ອນ, ແລະ ນ້ຳມັນເຊື້ອເພີງຊີວະພາບ.
- ⇒ ການເກັບຮັກສາທາດຄາບອນ ເຊັ່ນ ປູກປ່າຄືນໃໝ່ ແລະ ຝຸ່ນຊີວະພາບ.



## ການເຊື່ອມໂຊມຂອງດິນ:

ຍຸດທະສາດບຸລິມະສິດເລັ່ງໃສ່ 3 ຈຸດ : i) ຮັກສາ ແລະ ປັບປຸງການບໍລິການຂອງລະບົບນິເວດທີ່ຕອບສະໜອງຊຸມຊົນຍັ້ງຍືນ, ແລະ ii) ລຸດຜ່ອນຜົນກະທົບຕໍ່ຊັບພະຍາກອນທຳມະຊາດ ຍ້ອນສາເຫດກິດຈະກຳຂອງມະນຸດ. ຍຸດທະສາດທີ່ iii) ໄດ້ເລັ່ງໃສເຂດແຫ້ງແລ້ງ, ລວມທັງສົ່ງເສີມຄວາມຍືນຍົງຂອງຊີວິດການເປັນຢູ່ ທີ່ອາໄສທຳມະຊາດໃນຂົງເຂດນັ້ນ.

ໂຄງການທີ່ແຜນງານໂຄງການຂະໜາດນ້ອຍສະໜັບສະໜູນໃນກອບບຸລິມະສິດຍຸທະສາດການປັບປຸງ ແລະ ຮັກສາລະບົບນິເວດໃນການເສີມສ້າງຄວາມອາດສາມາດຂອງຊຸມຊົນທ້ອງຖິ່ນໃນການນຳໃຊ້ ແລະ ຕັດສິນໃຈທີ່ດີໃນການບໍລິຫານຈັດການເຊັ່ນພູມສັນຖານເພື່ອຊີວິດການເປັນຢູ່ທີ່ດີຂຶ້ນຂອງຊຸມຊົນ. ນອກເໜືອຈາກນັ້ນ, ແຜນງານໄດ້ເລັ່ງທຸກວິທີທາງແບບປະສົມປະສານເພື່ອປັບປຸງຄຸນນະພາບຂອງດິນ, ຈັດການແຫຼ່ງນ້ຳ, ພືດ ແລະ ສັດລ້ຽງຂອງຄອບຄົວ.



## ການຈັດການປ່າໄມ້ແບບຍືນຍົງ:

ລວມມີກິດຈະກຳທີ່ສະໜັບສະໜູນການຟື້ນຟູປ່າໄມ້, ປົກປັກຮັກສາປ່າໄມ້ ແລະ ບົດບາດໜ້າທີ່ທາງເສດຖະກິດ. ກິດຈະກຳຟື້ນຟູລວມມີປູກປ່າຄືນໃໝ່, ສວນກ້າ, ການປູກຕົ້ນໄມ້, ຄວາມອຸດົມສົມບູນຂອງປ່າໄມ້, ສ້າງເປັນປ່ານຳໃຊ້, ປ່າໄມ້ຊຸມຊົນເຊັ່ນ ແລວຂອງປ່າໄມ້ ແລະ ການປູກເປັນຂອບເຂດ, ປູກປ່າເພື່ອນຳໃຊ້ ແລະ ສວນຄົວ, ແລະ ກະສິກຳປ່າໄມ້. ປົກປັກຮັກສາໜ້າທີ່ຄວາມສຳຄັນລວມທັງການຈັດການແຫຼ່ງນ້ຳ, ການອະນຸລັກນ້ຳ ແລະ ດິນ, ດອນຊາຍ, ຄວບຄຸມການເປັນທະເລຊາຍ, ປ້ອງກັນແຄມຝັງ, ປ້ອງກັນເຂດສະຫງວນ, ປູກປ່າຄືນໃໝ່, ນຳໃຊ້ພູມປັນຍາຊາວບ້ານຈັດການພືດປູກ, ລະບົບການຈັດການປ່າໄມ້, ແລະ ສ້າງຕັ້ງປ່າໄມ້ຊຸມຊົນ. ບົດບາດທາງເສດຖະກິດລວມມີການຈັດການປ່າໄມ້ຊຸມຊົນສຳລັບ: ເປັນບ່ອນພັກຜ່ອນ, ການທ້ອງທ່ຽວ, ການສຶກສາ ແລະ ການອະນຸລັກທາງຮີດຄອງ ແລະ ວັດທະນະທຳຂອງການບໍລິການທາງສັງຄົມ.



## ແຫຼ່ງນ້ຳສາກົນ:

ແຜນງານສະໜັບສະໜູນການຈັດການແຫຼ່ງນ້ຳສາກົນຜ່ານເຄືອຄ່າຍພາກພື້ນຂອງກິດຈະກຳຊຸມຊົນ.

ລວມມີກິດຈະກຳດັ່ງນີ້:

- ⇒ ອະນຸລັກ ແລະ ຟື້ນຟູແຄມຝັງ (ພືດນ້ຳ ແລະ ຊະນິດພືດອື່ນໆຂອງໜອງນ້ຳ);
- ⇒ ການຈັດການແຫຼ່ງນ້ຳ;
- ⇒ ການປ້ອງກັນມົນລະພິດທາງບົກ ແລະ ການລຸດຜ່ອນ;
- ⇒ ການຈັດການປະມົງແບບຍືນຍົງ;
- ⇒ ປົກປັກຮັກສາ ແລະ ການນຳໃຊ້ການບໍລິການຂອງລະບົບນິເວດແບບຍືນຍົງ;
- ⇒ ປົກປັກຮັກສາປ່າ ແລະ ການຟື້ນຟູປ່າໃນຂົງເຂດອ່າງເກັບນ້ຳ;
- ⇒ ຊອກຫາທາງເລືອກເພື່ອລຸດຜ່ອນຜົນກະທົບຕໍ່ການປະມົງ ແລະ ຊັບພະຍາກອນທຳມະຊາດອື່ນໆ;
- ⇒ ການພັດທະນາຄວາມສາມາດ ແລະ ການແລກປ່ຽນບົດຮຽນລະຫວ່າງຊຸມຊົນດ້ວຍກັນໃນການຈັດການແຫຼ່ງນ້ຳ.



## ສານເຄມີ:

ໂຄງການຂອງແຜນງານລວມມີກິດຈະກຳຕ່າງໆທີ່ສາມາດຊອກໄດ້ທີ່ SGP POPs Training Module):

- ⇒ ສົ່ງເສີມກິດຈະກຳທີ່ເປັນມິດຕໍ່ສິ່ງແວດລ້ອມຫຼີກລຽງການເຜົາໄມ້ທີ່ບໍ່ມີສິ່ງປົກຄຸມທີ່ຈະປົດປ່ອຍມົນລະພິດ POPs;
- ⇒ ກຳນົດ, ຈັດການ ແລະ ຢາຂ້າສັດຕູພືດທີ່ບໍ່ໃຊ້ແລ້ວ;
- ⇒ ສົ່ງເສີມການໃຊ້ຝຸ່ນຊີວະພາບ ແລະ ກະສິກຳຍືນຍົງເພື່ອຫຼີກລຽງການນຳໃຊ້ສານເຄມີ ແລະ ລຸດຜ່ອນການເຊື່ອມໂຊມຂອງດິນ;
- ⇒ ກຳຈັດ, ຈັດການ ແລະ  ການຖິ້ມສິ່ງເສດເຫຼືອທີ່ເປັນມິດຕໍ່ສິ່ງແວດລ້ອມຂອງສານສັງເຄາະ PCB;
- ⇒ ເສີມສ້າງການປູກຈິດສຳນຶກຂອງຊຸມຊົນ ແລະ ຄວາມເຂົ້າໃຈຕໍ່ກັບສານເຄມີ POPs ແລະ ຜົນກະທົບຕໍ່ກັບມະນຸດ ແລະ ລະບົບນິເວດ;
- ⇒ ພັດທະນາອົງການຈັດຕັ້ງມວນຊົນ (CSOs) ແລະ ຊຸມຊົນເຂັ້ມແຂງເພື່ອຈັດການບັນຫາສານເຄມີ POPs.

ກອງທຶນສິ່ງແວດລ້ອມໂລກແຜນງານໂຄງການຂະໜາດນ້ອຍປະຈຳລາວໃຫ້ເງິນການຊ່ວຍເຫຼືອສູງເຖິງ $50,000 ໂດຍກົງໃຫ້ແກ່ຊຸມຊົນ ລວມທັງຊົນເຜົ່າ, ອົງການຈັດຕັ້ງຊຸມຊົນ ແລະ ອົງການຈັດຕັ້ງອື່ນທີ່ບໍ່ແມ່ນລັດທະບານ ໃນໂຄງການຂອງ ຊີວະນາໆພັນ, ການປັບຕົວ ແລະ ການຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ, ການເຊື່ອມໂຊມຂອງດິນ, ການຈັດການປ່າໄມ້ແບບຍືນຍົງ, ແຫຼ່ງນ□້າສາກົນ ແລະ ສານເຄມີ.

ກອງທຶນສິ່ງແວດລ້ອມໂລກແຜນງານໂຄງການຂະໜາດນ້ອຍຜ່ານອົງການສະຫະປະຊາຊາດເພື່ອການພັດທະນາ, ມີຄວາມເຊື່ອວ່າສິ່ງແວດລ້ອມໂລກໄດ້ຮັບການແກ້ໄຂຖ້າຫາກຊຸມຊົນມີສ່ວນຮ່ວມ ແລະ ຊຸມຊົນເປັນຜູ້ໄດ້ຮັບຜົນປະໂຫຍດໂດຍກົງ ແລະ ເປັນເຈົ້າຂອງ. ພວກເຮົາໃຫ້ທຶນການຊ່ວຍເຫຼືອ, ອຳນວຍຄວາມສະດວກຄູ່ຮ່ວມພັດທະນາ ແລະ ສະໜັບສະໜູນເຄືອຄ່າຍການພັດທະນາຂອງຄູ່ຮ່ວມພັດທະນາໃຫ້ມີຄວາມເຂັ້ມແຂງເພື່ອແກ້ໄຂບັນຫາສິ່ງແວດລ້ອມໂລກ ແລະ ສົ່ງເສີມການພັດທະນາທີ່ຍືນຍົງ.

ຂໍ້ມູນເພີ່ມເຕີມສາມາດຕິດຕໍ່ໄດ້ທີ່:


The GEF Small Grants Programme, Lao PDR, Tel: +856-21-267 750, Fax: +856-21-264 939; 267 799,

Email: bounmy.phommakone@undp.org

https://www.sgp.undp.org/